# ທ່ານ ຮອງຜູ້ວ່າການທະນາຄານແຫ່ງ ສປປ ລາວ

# ເຄື່ອນໄຫວຊີ້ນຳວຽກງານກຳມະບານ



ຂ່າວ - ພາບ : ຣັດສະໝີ ດວງສັດຈະ

ທ່ານ ບຸນສິງ ສິມມາລາວົງ ຮອງເລຂາຄະນະພັກ,ຮອງຜູ້ວ່າການທະນາຄານແຫ່ງ ສປປລາວ ແລະ ທ່ານ ອາລຸນ ບຸນຍົງ ປະທານກຳມະບານຮາກຖານທະນາຄານແຫ່ງ ສປປລາວ ພ້ອມຄະນະໄດ້ຮ່ວມກັນ ລົງຕິດຕາມ-ກວດກາ ແລະ ຊີ້ນຳວຽກງານຢູ່ໜ່ວຍກຳມະບານສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ແລະ ຕະຫຼາດຫຼັກຊັບ, ໜ່ວຍກຳມະບານກອງທຶນປົກປ້ອງຜູ້ຝາກເງິນ ແລະ ສູນບໍລິການຊື້ໜີ້ ແລະ ຮັບຝາກໜີ້ .

ຢູ່ແຕ່ລະແຫ່ງທ່ານຮອງຜູ້ວ່າການທະນາຄານແຫ່ງ ສປປລາວ ແລະ ປະທານກຳມະບານຮາກຖານ ໄດ້ຮັບ ການລາຍງານສະພາບການເຄື່ອນໄຫວຂອງວຽກງານຂອງບັນດາໜ່ວຍກຳມະບານຈາກສະຫາຍຫົວໜ້າໜ່ວຍ ໂດຍໄດ້ສະຫຼຸບສັງລວມການເຄື່ອນໄຫວດ້ານຕັ້ງໜ້າ,ຜົນງານທີ່ພົ້ນເດັ່ນ,ຈຸດຄົງຄ້າງ,ບົດຮຽນທີ່ຖອດຖອນໄດ້,ພ້ອມ ທັງຂໍ້ສະດວກ-ຂໍ້ຫຍຸ້ງຍາກໃນການຈັດຕັ້ງປະຕິບັດ, ນອກນີ້ກໍ່ໄດ້ມີຄຳສະເໜີຂໍ້ຄິດເຫັນຈາກໜ່ວຍກຳມະບານຢ່າງ ເປັນປະຊາທິປະໄຕ,ພ້ອມດຽວກັນເບື້ອງອຳນາດການປົກຄອງຂອງສຳນັກງານຄຸ້ມຄອງຫຼັກຊັບ ແລະ

ຕະຫຼາດຫຼັກຊັບ ທ່ານ ນາງ ວັດທະນາ ດາລາລອຍ ຫົວໜ້າສຳນັກງານດັ່ງກ່າວ, ທ່ານ ສັນຕິ ພົນເມືອງລາວ ຮັກສາການຜູ້ອຳນວຍການກອງທຶນ ແລະ ຮອງຜູ້ອຳນວຍການສູນບໍລິການຊື້ໜີ້ ກໍໄດ້ມີຄຳສະເໜີ ແລະ ແຈ້ງເຖິງການຮ່ວມມືທີ່ດີເຊິ່ງໄດ້ສ້າງເງື່ອນໄຂທີ່ເອື້ອອຳນວຍໃຫ້ແກ່ໜ່ວຍກຳມະບານໄດ້ເຄື່ອນໄຫວຕາມພາລະບົດບາດ ແລະສາມາດເຮັດສຳເລັດອັນຈິບງາມທີ່ທາງອຳນວຍການວາງອອກ.

ທ່ານ ອາລຸນ ບຸນຍົງ ປະທານກຳມະບານຮາກຖານ ທຫລ ແລະ ຄະນະຕິດຕາມກໍ່ໄດ້ຮ່ວມກັນສົນທະນາ ແລະ ໄດ້ຄົ້ນຄ້ວາແກ້ໄຂບັນດາຂໍ້ຄິດ ແລະ ຄຳສະເໜີທີ່ພົວພັນເຖິງວຽກງານກຳມະບານ,ຈາກນັ້ນທ່ານ ບຸນສົງ ສົມມາລາວົງ  ກໍ່ໄດ້ໃຫ້ທິດຊີ້ນຳຕໍ່ອຳນາດການປົກຄອງ,ຄະນະນຳ ແລະ ສະມາຊິກກຳມະບານໃນສາມແຫ່ງ ຈົ່ງພ້ອມກັນສືບຕໍ່ເສີມຂະຫຍາຍມູນເຊື້ອອັນດີງາມຂອງຕົນ,ເພີ່ມທະວີຄວາມສາມັກຄີເປັນປຶກແຜ່ນໂດຍເຄື່ອນໄຫວໃຫ້ຖືກຕ້ອງ ແລະ ສອດຄ່ອງຕາມພາລະບົດບາດຂອງອົງການຈັດຕັ້ງກຳມະບານເຂົ້າຮ່ວມວຽກງານປ້ອງກັນຄວາມສະຫງົບ,ຕັ້ງໜ້າເຮັດໜ້າທີ່ດ້ວຍຄວາມຮັບຜິດຊອບນສູງ ແລະ ສືບຕໍ່ສ້າງໃຫ້ໜ່ວຍກຳມະບານກໍ່ຄືວຽກງານຂອງຕົນກ້າວສູ່ຜົນສຳເລັດໃໝ່ ແລະ ໃຫຍ່ຫຼວງກວ່າເກົ່າເປັນຜົນງານເພື່ອປະດັບເອ້ກອງປະຊຸມໃຫຍ່ກຳມະບານ ແລະກອງປະຊຸມໃຫຍ່ຄັ້ງທີ່ II ຂອງອົງຄະນະພັກທະນາຄານແຫ່ງ ສປປລາວ.